# ໂຊໂຟນີ (ໂຊຟັນຢາ)

| | |
|---|---|
| ໃຈຄວາມສຳຄັນ | ພຣະເຈົ້າພິພາກສາແລະຊ່ອຍໃຫ້ພົ້ນ |
| ຈຳນວນບົດ | ໓ ບົດ |
| ເຣື່ອງເກີດຂຶ້ນແຕ່ປີ | ໖໓໐ ຈົນເຖິງ ໖໑໐ ກ່ອນ ຄ.ສ. |
| ຈັກກະພັດທີ່ມີອຳນາດ | ນີນີເວ |
| ໂຊໂຟນີແປວ່າ | ຜູ້ທີ່ພຣະເຈົ້າຊົງປົກໄວ້ |
| ຜູ້ທຳນວາຍຄົນທີ່ | ໙ |

## ໑. ວ່າດ້ວຍປວັດແລະຄາວສໄມຂອງໂຊໂຟນີ

ໂຊໂຟນີ ເປັນ ຄົນທີ່ ມາ ຈາກ ເຊື້ອສາຍ ຂອງ ກະສັດເອເຊເກັຍເຊ ເພີ່ນໄດ້ ທຳນວາຍໃນຄາວ ຂອງ ກະສັດໂຢເຊັຍເຊດທຳນວາຍກ່ອນເຂົາໄດ້ ພົບພຣະບັນຍັດໃນພຣະວິຫານ (໒ ກະສັດ ໒໒:໘–໑໐) ຊຶ່ງເປັນຄາວ ທີ່ພວກຢູດາກະທຳຜິດກະທຳບາບຫລາຍທີ່ສຸດເພາະໃນຄາວນັ້ນມີ ກະສັດມາ ມາເຊຜູ້ບໍ່ດີເປັນຜູ້ປົກຄອງຈຶ່ງນຳພາພວກເຂົາໄປໃນທາງຊົ່ວຮ້າຍ

## ໒. ວ່າດ້ວຍເນື້ອຄວາມ

໑. ໂຊໂຟນີໄດ້ບອກວ່າ ວັນລົງໂທດຂອງພຣະເຢໂຮວາຂະຫຍັບ ເຂົ້າມາໃກ້ແລ້ວ (໑:໑໔–໑໘) ວັນນັ້ນຈະເປັນວັນພິພາກ- ສາພວກຢູດາ ຖ້າຫາກພວກເຂົາບໍ່ຫລົບຕັ້ງໃຈໃໝ່ ແລະ ໂຊໂຟນີ ຍັງ ໄດ້ ທຳນວາຍ ຕໍ່ສູ້ ພວກ ຕ່າງປະເທດ ອີກຄືຊາວ

ຟີລິດຕິນ ຊາວໂມອາບ, ຊາວອາໂມນ, ຊາວເອດຢອບີ, ແລະຊາວອາຊີຣີອ່າ ພວກເຂົາຈະຖືກໂທດຖ້າບໍ່ຫລົບຕັ້ງໃຈໃໝ່

໒. ໂຊໄຟນີຕັກເຕີນເຂົາໃຫ້ຫລົບມາຫາພຣະເຈົ້າ (໒:໓)

໓. ໂຊໄຟນີເຕີນໃຫ້ພວກເຂົາຊົມຊື່ນຍິນດີ ເພາະພຣະເຈົ້າຈະຊົງໂຜດພວກ ຂອງ ພຣະອົງໃຫ້ພົ້ນຈາກສັດຕູ ແລະ ຈະຫ້ອມໂຮມພວກຂອງພຣະອົງໄວ້ (໓:໑໔-໒໐) ຂໍ້ຄວາມແບບນີ້ກໍ່ມີໃນຄໍາທໍານວາຍຂອງຫລາຍໆຄົນ

## ໓. ການຈັດເປັນບົດຫົວຂໍ້ບົດ

ບົດທີ ໑ ການພິພາກສາ

ບົດທີ ໒ ຄໍາເອີ້ນໃຫ້ປະໃຈເກົ່າເອົາໃຈໃໝ່

ບົດທີ ໓ ຄວາມຫວັງໃຈ